San Diego City Schools

Fact Sheet

ລະດູຫນາວ 2004

# ເຂົ້າຮ່ວມພົວພັນຢູ່ໃນໂຮງຮຽນຂອງຂ້າພະເຈົ້າ

ໃນຖານະເປັນພໍ່ແມ່ຂອງນັກຮຽນຄົນນຶ່ງ ຫລື ຫລາຍຄົນ ຢູ່ໃນໂຮງຮຽນເຂດສຶກສາແຊນດີເອໂກນັ້ນ, ມີທາງເຂົ້າຮ່ວມພົວພັນຢູ່ໃນການສຶກສາຂອງເດັກທ່ານຫລາຍໆຢ່າງ. ນັກຄົ້ນຄວ້າໃຫ້ຫລັກຖານວ່າເມື່ອພໍ່ແມ່ເຂົ້າຮ່ວມພົວພັນນັ້ນ, ເດັກຂອງເຂົາເຈົ້າປັບປຸງ ໄດ້ດີຂຶ້ນທັງສອງຢ່າງຄືດ້ານວິຊາຮຽນ ແລະ ດ້ານສັງຄົມ. ເຂດສຶກສາແຊນດີເອໂກໄດ້ຊຸກຍູ້ໃຫ້ທ່ານເຂົ້າຮ່ວມຊ່ວຍເຫລືອຢູ່ທີ່ບ້ານ, ຫ້ອງຮຽນ ແລະ ໃນໂຮງຮຽນຂອງພວກເຮົາ. ຖ້າທ່ານສົນໃຈຢາກມີໂອກາດເຂົ້າຮ່ວມອາສາສມັກນັ້ນ, ຂໍເຊີນອ່ານທີ່ **Fact Sheet** ຂອງການພົວພັນພໍ່ແມ່ນັກຮຽນ ຂັ້ນສູນກາງສຶກສາ ທີ່: www.sandi.net/comm/factsheets/index.html#9.

## ບົດສລູບ

ນີ້ຄືການຈັດຕັ້ງບາງຢ່າງທີ່ພໍ່ແມ່ສາມາດເຂົ້າຮ່ວມພົວພັນ ຢູ່ໃນໂຮງຮຽນຂອງເຂົາເຈົ້າ:

- ສະພາປະຈໍາໂຮງຮຽນ (**SSC**)
- ຄະນະປົກຄອງປະຈໍາໂຮງຮຽນ (**SGT**)
- ຄະນະທີ່ປຶກສາ ຜູ່ຮຽນອັງກິດ (**ELAC**)
- ມູນນິທິ (**Foundations**)
- ສະພາສູນກາງສຶກສາແຊນດີເອໂກ ຂອງ ສະມາຄົມພໍ່ແມນັກຮຽນ–ຄຣູ (**PTA**)
- ໂຄງການອາສາສມັກ ຂອງໂຮງຮຽນ

ກຸ່ມທີ່ປຶກສາການນໍາພາ–ຂັ້ນສູນກາງສຶກສາ;

- ສະພາປະຈໍາໂຮງຮຽນ (**SSC**)

SSC ນີ້ແມ່ນ ກຸ່ມຕັດສິນ ທີ່ເລືອກຕັ້ງຂຶ້ນໂດຍປະກອບດ້ວຍບັນດາພໍ່ແມ່ນັກຮຽນ, ບຸກຄົນຈາກສັງຄົມ, ພະນັກງານປົກຄອງປະຈໍາໂຮງຮຽນ, ບັນດາຄຣູ ແລະ ພະນັກງານອື່ນໆໃນໂຮງຮຽນ. ຂັ້ນໂຮງຮຽນມັທຍົມນັ້ນ, ຈະມີນັກຮຽນຮ່ວມນໍາດ້ວຍ. ອັນນີ້ເປັນໂອກາດອັນດີທີ່ພໍ່ແມ່ຈະໄດ້ອອກຄວາມເຫັນຕ່າງໆ. SSC ນີ້ໄດ້ມີການປັບປຸງຄວາມຮັບຜິດຊອບ, ການປະຕິບັດງານ, ການກໍາກັບ, ປະເມີນຜົນແຜນປະຈໍາໂຮງຮຽນເປັນຂັ້ນໆໄປ. ຢູ່ໃນໂຮງຮຽນ ທາຍໂທ 1 ນັ້ນ, SSC ຍັງໄດ້ດູແລທຶນຕ່າງໆ ເຊັ່ນວ່າ ທຶນ ທາຍໂຕ 1, ທຶນພາສາທີສອງ, ແລະ ທຶກໂຄງການ **GATE.** ເຣີ່ມແຕ່ສົກຮຽນປີ 2003, ທຸກໆໂຮງຮຽນຕ້ອງມີສະພາປະຈໍາໂຮງຮຽນ (SSC) ເຖິງເຂົາເຈົ້າຈະໄດ້ຮັບທຶນ ໂຄງການທາຍໂທ 1 ຫລື ບໍ່ກໍຕາມ. ເພື່ອລາຍລະອຽດເພີ້ມເຕີມ ຂໍໃຫ້ຕິດຕໍ່ຫາຫົວໜ້າຫມວດໂຮງຮຽນຂອງທ່ານ, ປະທານສະພາປະຈໍາໂຮງຮຽນຖ້າມີ ຫລື ອ່ານຢູ່ທີ່ຕາຫນ່າງຂ່າວຂອງ SSC ທີ່: http://www.sandi.net/saa/accountability/SSC/index.asp.

- ຄະນະປົກຄອງປະຈໍາໂຮງຮຽນ (**SGT**)

ຫນ້າທີ່ຂອງ SGT ນີ້ແມ່ນອອກແບບ ແລະ ປະຕິບັດຍຸທະວິທີອັນຖືກຕ້ອງ ເພື່ອປັບປຸງຄວາມກ້າວຫນ້າຂອງພວກນັກຮຽນຕໍ່ໆໄປໂດຍຜ່ານການສິດສອນ ແລະ ການຮໍ່າຮຽນທີ່ມີຄຸນນະພາບອັນດີ ຂອງແຕ່ລະໂຮງຮຽນໃຜມັນ. SGT ແມ່ນການຈັດຕັ້ງຂັ້ນໂຮງຮຽນ, ເປັນກຸ່ມຕັດສິນໃຈໂດຍຜ່ານໂຮງຮຽນກັບສູນກາງສຶກສາ ເພື່ອເປັນຂໍ້ຕົກລົງລະຫວ່າງສູນກາງສຶກສາ (SDCS) ແລະ ສະມາຄົມການສຶກສາແຊນດີເອໂກ (SDEA). ຊຶ່ງເປັນພາກສ່ວນການສັນຍາຂອງສະມາຄົມການສຶກສາແຊນດີເອໂກ, ຄະນະປົກຄອງປະຈໍາໂຮງຮຽນ (SGT) ຕ້ອງໄດ້ເຂົ້າປະກອບສ່ວນເຂົ້າໃນ SDEA **50** ເປີເຊັນ, ພໍ່ແມ່/ບຸກຄົນຈາກສັງຄົມ **35** ເປີເຊັນ ຫລື ຢ່າງນ້ອຍສາມຄົນ, ບຸກຄົນອື່ນໆອີກ **15** ເປີເຊັນ, ຮວມທັງຜູ່ຕາງຫນ້າຈາກສະມາຄົມພະນັກງານໂຮງຮຽນຣັຖຄາລີຟໍເນັຍ (CSEA) ແລະ ພວກນັກຮຽນຂັ້ນມັທຍົມ. ເພື່ອລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ຫາຫົວຫນ້າຫມວດໂຮງຮຽນຂອງທ່ານ, ຫລື ປະທານຄະນະປົກຄອງປະຈໍາໂຮງຮຽນ (SGT).

- ຄະນະທີ່ປຶກສາ ຜູ່ຮຽນອັງກິດ (**ELAC**)

ຖ້າໂຮງຮຽນນັ້ນມີຜູ່ຮຽນອັງກິດ ຫລາຍກວ່າ **21** ຄົນ, ໂຮງຮຽນຂອງທ່ານຈະຖືກຮຽກຮ້ອງຈໍາເປັນໃຫ້ມີ ຄະນະທີ່ປຶກສາຜູ່ຮຽນອັງກິດ (ELAC), ໂດຍປະກອບດ້ວຍບັນດາພໍ່ແມ່ນັກຮຽນຜູ່ທີ່ຮຽນພາສາອັງກິດ, ບຸກຄົນຈາກສັງຄົມ, ແລະ ພະນັກງານໂຮງຮຽນ ຊຶ່ງຈະເປັນຄະນະໃຫ້ການປຶກສາແກ່ຫົວຫນ້າຫມວດໂຮງຮຽນກ່ຽວກັບໂຄງການຮຽນພາສາອັງກິດ ແລະ ການບໍຣິການຊ່ວຍເຫລືອຢູ່ໃນໂຮງຮຽນຂອງທ່ານ. ELAC ນີ້ຍັງໄດ້ໃຫ້ການແນະນໍາແກ່ ສະພາປະຈໍາໂຮງຮຽນ (SSC) ກ່ຽວກັບໂຄງການຮຽນ ແລະ ການໃຊ້ທຶນຂອງຄະນະທີ່ປຶກສາ ຜູ່ຮຽນອັງກິດ (ELAC). ເພື່ອລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ຫາຫົວຫນ້າຫມວດໂຮງຮຽນຂອງທ່ານ, ປະທານຄະນະທີ່ປຶກສາຜູ່ຮຽນອັງກິດ ຫລື ເຂົ້າອ່ານຢູ່ທີ່ຕາຫນ່າງຂ່າວຂອງ ELAC ທີ່: http://www.sandi.net/comm/factsheets/eng_learners.pdf.

- ມູນນິທິ (**Foundations**)

ຂໍໃຫ້ຂຽນອະທິບາຍກິຈກັມເປັນປະໂຍກສັ້ນໆ ທີ່ມູນນິທິຂອງທ່ານໄດ້ໃຊ້ທຶນ ຫລື ຈະໃຊ້ທຶນ, ເຊັ່ນວ່າ ທຶນນ້ອຍໆໃຫ້ນາຍຄຣູ, ໃຫ້ແກ່ການໄປທັສນະສຶກສາ, ທຶນການຮຽນ, ທຶນການສິດສອນບໍາຣຸງແກ່ຄຣູ, ແລະ ອື່ນໆຕໍ່ໄປ. ອະທິບາຍຄ່າທະບຽນປະຈໍາປີ, ງົບປະມານປະຈໍາປີ, ແລະ ອື່ນໆ. ປົກກະຕິແລ້ວ, ມູນນິທິອັນນຶ່ງຈະລົງທະບຽນເປັນການຈັດຕັ້ງທີ່ບໍ່ຫາລາຍໄດ້ກໍາໄຣ **501**(c)(**3**) ເພື່ອຫາລາຍໄດ້ເປັນທຶນໃຫ້ໂຮງຮຽນຂອງພວກເຮົາ. ຫ້ອງການສັມພັນຊຸມຊົນມີໄວ້ເພື່ອຊ່ວຍໂຮງຮຽນຕ່າງໆທີ່ສົນໃຈຈະຕັ້ງມູນນິທິນີ້. ເພື່ອເອົາລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ຫາຫົວຫນ້າຫມວດໂຮງຮຽນຂອງທ່ານ ຫລື ປະທານມູນນິທິ.

**Janet D. Delaney,** ຜູ່ຕິດຕໍ່ປະສານງານ ຂອງພະນັກງານ (**619**) **725–5593** jdelaney@sandi.net

–ອ່ານຫນ້າຕໍ່ໄປ–

- ສະພາສູນກາງສຶກສາແຊນດິເອໂກ ຂອງສະມາຄົມພໍ່ແມ່ນັກຮຽນ–ຄຣູ (**PTA**)

ຈຸດປະສົງຕົ້ນຕໍ່ຂອງ PTA ທົ່ວປະເທດນັ້ນແມ່ນ ເພື່ອສົ່ງເສີມຄວາມຢູ່ດີກິນດີຂອງເດັກຢູ່ທີ່ບ້ານ, ຢູ່ທີ່ໂຮງຮຽນ ແລະໃນສັງຄົມ. ອະທິບາຍຈຸດປະສົງ, ໂຄງການ ແລະ ກິຈກັມຕ່າງໆ ປະຈໍາປີຂອງ PTA ແລະ ວິທີສໍາເຣັດທີ່ຄືກັບໂຄງການຮຽນໃນໂຮງຮຽນຂອງທ່ານ. ກະຣຸນາໂທຣະສັບຫາຫົວໜ້າໝວດໂຮງຮຽນຂອງທ່ານ, ປະທານພໍ່ແມ່ນັກຮຽນ–ຄຣູ, ສະພາສູນກາງສຶກສາແຊນດິເອໂກ ຂອງສະມາຄົມພໍ່ແມ່ນັກຮຽນ–ຄຣູ ຫລື ອ່ານທີ່ຕາໜ່າງຂ່າວ ສະມາຄົມພໍ່ແມ່ນັກຮຽນ–ຄຣູຂັ້ນທົ່ວປະເທດທີ່: http://www.pta.org/.

**Debbie Vincent,** ປະທານ (619) 297–8721 bzydeb@san.rr.com
ສະພາສູນກາງສຶກສາແຊນດິເອໂກ ຂອງສະມາຄົມພໍ່ແມ່ນັກຮຽນ–ຄຣູ

- ໂຄງການອາສາສມັກ ຂອງໂຮງຮຽນ (**School Volunteer Program**)

ໂຮງຮຽນເຂດສຶກສາແຊນດິເອໂກ ໄດ້ຮັບຜົນປະໂຍດຈາກ ນັກອາສາມັກຂອງຊຸມຊົນຫລາຍກວ່າ **23,000** ຄົນ ຮວມມີທັງບັນດາພໍ່ແມ່, ຄູ່ຮ່ວມງານຈາກທຸຣະກິດ/ມວນຊົນ, ບຸກຄົນໃນສັງຄົມ, ຜູ່ເຖົ້າຜູ່ແກ່, ນັກຮຽນວິທຍາລັຍ ແລະ ນັກຮຽນຂອງພວກເຮົາ. ໃນປີທີ່ຜ່ານມານັກອາສາສມັກໄດ້ເຮັດວຽກຫລາຍກວ່າ **650,000** ຊົ່ວໂມງ. ກິຈກັມທີ່ເຂົາເຈົ້າເຮັດນັ້ນຮວມທັງ ດ້ານການສິດສອນບໍາຣຸງ, ການບອກສອນແນະນໍາ, ການອ່ານອອກສຽງດັງໆ, ຊ່ວຍຢູ່ໃນຫ້ອງຮຽນ, ເຂົ້າຮ່ວມໃນການຈັດຕັ້ງຂອງໂຮງຮຽນ ເຊັ່ນວ່າ ສະມາຄົມພໍ່ແມ່ນັກຮຽນ–ຄຣູ (PTA), ສະພາປະຈໍາໂຮງຮຽນ (SSC), ມູນນິທິ (Foundations), ຫ້ອງສມຸດ, ຊ່ວຍກິຈກັມໃນໂຮງຮຽນ/ຫ້ອງຮຽນ, ຊ່ວຍຫ້ອງຮຽນທີ່ຮຽນຫລັງຈາກໂຮງຮຽນເລີກ, ເປັນພໍ່ແມ່ຍ່າງເລາະຮັກສາຄວາມປອດພັຍ, ແລະ ອີກອື່ນໆຕໍ່ໄປ. ທາງໂຮງຮຽນຈະບອກເຖິງສິ່ງທີ່ເຂົາເຈົ້າຕ້ອງການ. ແຕ່ລະໂຮງຮຽນຈະຈັດໃຫ້ມີຜູ້ປະສານງານນັກອາສາສມັກ ເພື່ອຊ່ວຍຄວາມຕ້ອງການຂອງນັກອາສາສມັກຢູ່ໃນໂຮງຮຽນນັ້ນໆ. ເພື່ອລາຍລະອຽດເພີ້ມເຕີມ, ຂໍໃຫ້ຕິດຕໍ່ຫາຫົວໜ້າໝວດໂຮງຮຽນ, ຜູ້ປະສານງານນັກອາສາສມັກ, ພໍ່ແມ່ຜູ່ຕິດຕໍ່ພົວພັນວິຊາການຮຽນ (PAL), ພະນັກງານຜູ່ຕິດຕໍ່ພົວພັນ ຫລືວ່າ ອ່ານຢູ່ທີ່ຕາໜ່າງຂ່າວທີ່: http://www.sandi.net/partners/PIE Volunteer Program.htm.

**Ellen Tiffany,** ຜູ່ຕິດຕໍ່ປະສານງານ ຂອງພະນັກງານ (619) 725–5594 etiffany@sandi.net

*Published with support from the Annie E. Casey Foundation*

ຕິດຕໍ່ເອົາລາຍລະອຽດໄດ້ທີ່: **Media inquires: (619) 725-5578** **www.sandi.net**

"ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 138,000 ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລິຟເນັຍ, ມີໂຮງຮຽນຫລາຍກວ່າ 200 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕໍາແໜ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈໍານວນພະນັກງານຫລາຍກວ່າ 18,800 ຄົນ.) ສູນກາງສຶກສາແຊນດິເອໂກປັບປຸງຄວາມສໍາເຣັດຂອງພວກນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ, ແລະ ວິຊາເລກ. ສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດໍາເນີນງານຜ່ານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ."

---

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສໍາເຣັດຂອງພວກນັກຮຽນ
ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮໍ່າຮຽນຢູ່ໃນຫ້ອງຮຽນ.